ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 025 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 25 ມັງກອນ 2021

# ແຈ້ງການ

ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ

- ວິສາຫະກິດທີ່ກ່ຽວຂ້ອງ

ເລື່ອງ: ໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການ ເລື່ອງການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ, ສະບັບເລກທີ 1720/ອຄ.ຄພນ, ລົງວັນທີ 09 ກັນຍາ 2011;
- ອີງຕາມ ບົດແນະນຳ ເລື່ອງມາດຕະການຕໍ່ການລະເມີດຂອງວິສາຫະກິດ ພາຍຫຼັງຂຶ້ນທະບຽນວິສາຫະກິດ ສະບັບເລກທີ 1556/ກທຄວ.ອຄ, ລົງວັນທີ 06 ພະຈິກ 2019;
- ອີງຕາມ ສະເໜີດນຳສົ່ງຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ, ສະບັບເລກທີ 0061/ອຄ.ນວ.ທຄວ, ລົງວັນທີ 13 ມັງກອນ 2021;
- ອີງຕາມ ສະໃບດນຳສົ່ງຂອງສ່ວນສາອາກອນປະຈຳ ນວ, ສະບັບເລກທີ 1063/ສອ.ນວ, ລົງວັນທີ 14 ທັນວາ 2020.

ບົນພື້ນຖານເອກະສານຂ້າງເທິງນີ້. ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຈຳນວນ 07 ຫົວໜ່ວຍວິສາຫະກິດ ເນື່ອງຈາກ ບໍ່ເຂົ້າໄປພົວພັນນຳຂະແໜງສ່ວຍສາອາກອນເພື່ອຢືນຢັນເລກປະຈຳຕົວຜູ້ເສຍອາກອນໃນລະບົບ Taxris ແລະ ບໍ່ທັນແຈ້ງເສຍພັນທະອາກອນຕາມສະໃບດນຳສົ່ງ ສະບັບເລກທີ 1063/ສອ.ນວ, ລົງວັນທີ 14 ທັນວາ 2020. ພ້ອມທັງ ບໍ່ລາຍງານຂໍ້ມູນໃນໄລຍະ 90 ວັນ ພາຍຫຼັງຂຶ້ນທະບຽນວິສາຫະກິດ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ມີລາຍລະອຽດດັ່ງນີ້:

| ລ/ດ | ຊື່ວິສາຫະກິດ | ເລກທີ | ລົງວັນທີ | ເລກລະຫັດວິສາຫະກິດ |
|---|---|---|---|---|
| 1 | ບໍລິສັດ ມີໄຊ ການຄ້າ ຈຳກັດຜູ້ດຽວ | 1195 | 18/12/2018 | 01-00021839 |
| 2 | ບໍລິສັດ ລາວ ເຊບຕີ ການຄ້າພາຍໃນ ນຳເຂົ້າ-ສົ່ງອອກ ຈຳກັດຜູ້ດຽວ | 2049 | 13/12/2019 | 01-00023327 |
| 3 | ບໍລິສັດ ປະມົງສຸຂະສົມ ແລະ ການຄ້າ ວິອາຊີ ຈຳກັດຜູ້ດຽວ | 1715 | 26/09/2019 | 01-00022779 |

CS Scanned with CamScanner



สแกนด้วย CamScanner

| | | | | |
|---|---|---|---|---|
| 4 | ໂຮງງານ ກຸ້ຍຊາງ ສະກັດນໍ້າຫົວສິງໄຄ ຈໍາກັດຜູ້ດຽວ | 1093 | 17/07/2019 | 01-00022557 |
| 5 | ບໍລິສັດ ລາວ ແອວຊີເອັດ ລິງທີນ ຈໍາກັດ | 1057 | 05/07/2019 | 01-00022534 |
| 6 | ວິສາຫະກິດສ່ວນບຸກຄົນ ມີລັດດາ ແລກປ່ຽນເງິນຕາ | 0317 | 06/03/2019 | 01-00022089 |
| 7 | ບໍລິສັດ ພູມີເຣຍ ລາວເອສເຕັດ ອິນເວສເມັ້ນ ຈໍາກັດຜູ້ດຽວ | 0031 | 14/01/2019 | 01-00021907 |

2. ຜົນຂອງການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ມີລາຍລະອຽດດັ່ງນີ້:

2.1. ບໍ່ສາມາດນໍາເອົາໃບທະບຽນວິສາຫະກິດດັ່ງກ່າວໄປເຄື່ອນໄຫວທຸລະກິດໄດ້. ໃນກໍລະນີລະເມີດ ຈະຖືກປະຕິບັດມາດຕະການ ຕາມມາດຕາ 212 ຂອງ ກົດໝາຍວ່າດ້ວຍວິສາຫະກິດ ແລະ ມາດຕາ 297 ຂອງປະມວນກົດໝາຍອາຍາ ຢ່າງເຂັ້ມງວດ;

2.2. ໃຫ້ ບໍລິສັດດັ່ງກ່າວ ເຂົ້າໄປພົວພັນກັບເຈົ້າໜ້າທີ່ສ່ວນສາອາກອນປະຈໍານະຄອນຫຼວງວຽງຈັນ ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ພ້ອມທັງເຂົ້າມາຊີ້ແຈງລະພາບການເຄື່ອນໄຫວທຸລະກິດຂອງຕົນ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອຊາບ.

2.3. ໃຫ້ນໍາເອົາໃບທະບຽນວິສາຫະກິດ (ຕົ້ນສະບັບ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເກັບຮັກສາໄວ້ຊົ່ວຄາວ. ບຸກຄົນ ຫຼື ນິຕິບຸກຄົນໃດ ຫາກນໍາເອົາໃບທະບຽນວິສາຫະກິດຂອງບັນດາວິສາຫະກິດດັ່ງກ່າວໄປນໍາໃຊ້ ນອກຈາກ ຈະຖືກປະຕິບັດມາດຕະການ ຕາມ ຂໍ້ 2.1 ເທິງນີ້ແລ້ວ ຍັງຕ້ອງຮັບຜິດຊອບທັງໝົດຕໍ່ໜ້າກົດໝາຍຈາກຜົນເສຍຫາຍທີ່ເກີດຂຶ້ນ.

3. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວນີ້ ມີຜົນເລີ່ມແຕ່ ***ວັນທີ 26 ມັງກອນ 2021 ເຖິງ ວັນທີ 27 ມີນາ 2021.*** ໃນກໍລະນີ ເກີນກໍານົດເວລາດັ່ງກ່າວ ຫາກບໍ່ດໍາເນີນການໃດໆ ຫຼື ດໍາເນີນການ ແຕ່ບໍ່ມີເຫດຜົນພຽງພໍ ຈະຖືກດໍາເນີນມາດຕະການ ສັ່ງໂຈະການເຄື່ອນໄຫວທຸລະກິດຖາວອນ ຫຼື ຍຸບເລີກ ຕາມຂັ້ນຕອນທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງປີ 2013.

ແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ທ. ຈຽງຄໍາ ທອງປະເສີດ

Chiengkham THONGPASEUTH

ບ່ອນສົ່ງ - ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ 1 ສະບັບ;
- ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ 1 ສະບັບ;
- ສ່ວນສາອາກອນປະຈໍາ ນວ 1 ສະບັບ;
- ພະແນກອຸດສາຫະກໍາ ແລະ ການຄ້າ ນວ 1 ສະບັບ;
- ບໍລິສັດທີ່ກ່ຽວຂ້ອງ 1 ສະບັບ;
- ສໍາເນົາ 1 ສະບັບ

Scanned with CamScanner



สแกนด้วย CamScanner